ບໍລິສັດ AGL ປະກັນໄພລາວ
Assurances General Laos

(FIH-1.0_2022)

# ເງື່ອນໄຂສັນຍາປະກັນໄພທີ່ຢູ່ອາໃສ

ສັນຍາປະກັນໄພສະບັບນີ້ ໄດ້ຮຽບຮຽງຂຶ້ນບົນພື້ນຖານຂອງກົດໝາຍວ່າດ້ວຍການປະກັນໄພ (ສະບັບປັບປຸງ) ເລກທີ 78/ສພຊ ລົງວັນທີ 29 ພະຈິກ 2019 ຊຶ່ງຕໍ່ໄປເອີ້ນວ່າ "ກົດໝາຍ" ແລະ ລັດຖະດຳລັດປະທານປະເທດເລກທີ 30/ປປທ ລົງວັນທີ 10 ມັງກອນ 2020 ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການປະກັນໄພ.

## ເງື່ອນໄຂທົ່ວໄປ:

### 1. ຄຳນິຍາມທົ່ວໄປ

**ບໍລິສັດ** ໝາຍເຖິງ ບໍລິສັດ ປະກັນໄພແຫ່ງປະເທດລາວ ຈຳກັດຜູ້ດຽວ
**ຜູ້ໄດ້ຮັບການປະກັນໄພ** ໝາຍເຖິງ ບຸກຄົນທີ່ຖືກລະບຸຊື່ເປັນຜູ້ໄດ້ຮັບການປະກັນໄພໃນໃບເງື່ອນໄຂສະເພາະ.
**ໃບເງື່ອນໄຂສະເພາະ** ໝາຍເຖິງ ເອກະສານລະບຸຂໍ້ມູນສະເພາະຂອງຜູ້ໄດ້ຮັບການປະກັນໄພ, ກຳນົດໄລຍະເວລາຄຸ້ມກັນ ແລະ ກຳນົດບັນດາໄພທີ່ຖືກຄຸ້ມກັນ ຈາກສັນຍາ.
**ໄລຍະເວລາຄຸ້ມກັນ** ໝາຍເຖິງ ໄລຍະເວລາຊຶ່ງເລີ່ມຕົ້ນນັບຈາກວັນເລີ່ມຕົ້ນຄຸ້ມກັນ ແລະ ສິ້ນສຸດຕາມວັນໝົດອາຍຸສັນຍາ, ດັ່ງລະບຸໃນໃບເງື່ອນໄຂສະເພາະ.
**ຄວາມເສຍຫາຍ** ໝາຍເຖິງ ການເສຍຫາຍທັງໝົດ ຫລື ບາງສ່ວນຕໍ່ຊັບສິນທີ່ໄດ້ຮັບການຄຸ້ມກັນຈາກການປະກັນໄພໄວ້ອັນເກີດຈາກເຫດການ ທີ່ໄດ້ຮັບການຄຸ້ມກັນ.

### 2. ຄວາມຖືກຕ້ອງ ແລະ ການປ່ຽນແປງຂໍ້ຄວາມໃນສັນຍາ

ສັນຍາຈະມີຜົນສັກສິດກໍ່ຕໍ່ເມື່ອທັງສອງຝ່າຍໄດ້ຕົກລົງເຫັນດີນຳກັນ, ການຄຸ້ມກັນຈະມີຜົນບັງຄັບໃຊ້ໄດ້ຢ່າງໄວທີ່ສຸດແມ່ນຕາມວັນເວລາທີ່ໄດ້ລະບຸໄວ້ໃນໃບເງື່ອນໄຂສະເພາະ ທຸກການປ່ຽນແປງແກ້ໄຂຂໍ້ຄວາມໃນສັນຍາຈະຕ້ອງໄດ້ຮັບການເຫັນດີຈາກບໍລິສັດ ແລະ ອອກສັນຍາເພີ້ມແນບທ້າຍສັນຍາຕົ້ນ.

### 3. ເງື່ອນໄຂບັງຄັບກ່ອນ

ບໍລິສັດຈະບໍ່ຮັບຜິດຊອບທົດແທນຄ່າເສຍຫາຍຕາມສັນຍາ, ເວັ້ນແຕ່ຜູ້ໄດ້ຮັບການປະກັນໄພໄດ້ປະຕິບັດຖືກຕ້ອງຕາມເງື່ອນໄຂຂອງສັນຍາປະກັນໄພ ຢ່າງຄົບຖ້ວນ.

### 4. ໜ້າທີ່ຂອງຜູ້ໄດ້ຮັບການປະກັນໄພໃນການຮຽກຮ້ອງຄ່າທົດແທນຄວາມເສຍຫາຍ

ໃນກໍລະນີມີເຫດການທີ່ອາດກໍ່ໃຫ້ເກີດການຮຽກຮ້ອງຄ່າສິນທົດແທນຄວາມເສຍຫາຍ, ຕາມສັນຍາປະກັນໄພນີ້ຜູ້ໄດ້ຮັບການປະກັນໄພຕ້ອງປະຕິບັດ, ດັ່ງຕໍ່ໄປນີ້:

4.1. ແຈ້ງໃຫ້ບໍລິສັດຮູ້ໂດຍໄວ ແລະ ຕ້ອງສົ່ງມອບຫລັກຖານເປັນລາຍລັກອັກສອນຕາມທີ່ລະບຸໄວ້ຂ້າງລຸ່ມນີ້ພາຍໃນ 15 ວັນ ນັບຈາກວັນທີ່ຜູ້ໄດ້ຮັບການປະກັນໄພໄດ້ຮູ້ກ່ຽວກັບຄວາມເສຍຫາຍ. ຖ້າຜູ້ໄດ້ຮັບການປະກັນໄພມີເຫດຈຳເປັນອັນສົມຄວນທີ່ບໍ່ສາມາດຈັດສົ່ງເອກະສານໄດ້ພາຍໃນເວລາທີ່ກຳນົດ ຫຼື ພາຍໃນກຳນົດເວລາທີ່ບໍລິສັດຂະຫຍາຍໃຫ້ໂດຍເຮັດເປັນລາຍລັກອັກສອນ ແລະ ໂດຍຄ່າໃຊ້ຈ່າຍຂອງຜູ້ໄດ້ຮັບການປະກັນໄພເອງ, ເອກະສານທີ່ຜູ້ໄດ້ຮັບການປະກັນໄພຕ້ອງໄດ້ກະກຽມມີຄື:

- 4.1.1 ສົ່ງຄຳຮຽກຮ້ອງເປັນລາຍລັກອັກສອນກ່ຽວກັບຄວາມເສຍຫາຍ ເຊິ່ງລວມທັງລາຍລະອຽດຂອງຊັບສິນທີ່ສູນເສຍ, ລວມທັງມູນຄ່າເສຍຫາຍໃນເວລາທີ່ເກີດອຸບັດຕິເຫດໂດຍລະອຽດເທົ່າທີ່ບໍລິສັດຕ້ອງການ ແລະ ຈຳເປັນ.
- 4.1.2 ແຈ້ງໃຫ້ບໍລິສັດຮູ້ກ່ຽວກັບການປະກັນໄພອື່ນໆ ລວມທັງສັນຍາປະກັນໄພທີ່ມີນຳບໍລິສັດອື່ນ, ໃນສ່ວນທີ່ກ່ຽວຂ້ອງກັບຊັບສິນທີ່ເອົາປະກັນໄພໄວ້.

4.2 ຕ້ອງສະແດງ ຫຼື ຈັດຫາ ຫຼື ແຈ້ງ ຫຼື ມອບໃຫ້ບໍລິສັດເຊື່ອໄດ້ແກ່ພະຍານ, ຫຼັກຖານ ແລະ ລາຍລະອຽດເພີ້ມເຕີມເຊັ່ນ : ແຜນຜັງ, ລາຍລະອຽດ ຕົ້ນສະບັບ, ຄູ່ສະບັບ ຫຼື ສຳເນົາຂອງເອກະສານນັ້ນໆ ພ້ອມທັງຂໍ້ພິສູດກ່ຽວກັບຕົ້ນເພີງ ຫຼື ສາເຫດທີ່ເຮັດໃຫ້ເກີດອັກຄີໄພ ຫຼື ທຸກໆເອກະສານກ່ຽວກັບການຮຽກຮ້ອງຄ່າເສຍຫາຍຕາມຄວາມຕ້ອງການຂອງບໍລິສັດ, ໂດຍແມ່ນຄ່າໃຊ້ຈ່າຍຂອງຜູ້ໄດ້ຮັບການປະກັນໄພເອງ.

4.3 ຕ້ອງໄດ້ດຳເນີນການ ແລະ ຍິນຍອມໃຫ້ບໍລິສັດ ຫຼື ຕົວແທນເຮັດທຸກວິທີທາງເພື່ອປ້ອງກັນຄວາມເສຍຫາຍບໍ່ໃຫ້ຂະຫຍາຍເພີ້ມ. ບໍລິສັດມີສິດທີ່ຈະບໍ່ພິຈາລະນາໃນການຊົດໃຊ້ສິນທົດແທນໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພຫາກຈົງໃຈ ຫຼື ມີເຫດທີ່ເຮັດໃຫ້ບໍລິສັດສາມາດພິສູດໄດ້ວ່າເຫດການດັ່ງກ່າວແມ່ນເຈດຕະນາທີ່ບໍ່ຢາກປະຕິບັດຕາມເງື່ອນໄຂຂໍ້ໃດຂໍ້ໜຶ່ງ, ດັ່ງທີ່ໄດ້ລະບຸໄວ້ໃນຂໍ້ 4 ຂ້າງເທິງໃນກໍລະນີທີ່ມີການຮຽກຮ້ອງຄ່າສິນທົດແທນຕໍ່ບໍລິສັດ ແລະ ຖ້າບໍລິສັດປະຕິເສດຄວາມຮັບຜິດຊອບບໍ່ວ່າດ້ວຍເຫດຜົນໃດກໍ່ຕາມ, ຈົນເປັນເຫດໃຫ້ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ເສຍຫາຍ, ນຳຄະດີຄວາມຂື້ນສູ່ການພິຈາລະນາຄະດີຂອງສານ ແລະ ຖ້າສານຕັດສິນຊີ້ຂາດໃຫ້ບໍລິສັດ ບໍ່ຊະນະຄະດີຄວາມ, ບໍລິສັດຕ້ອງໄດ້ຮັບຜິດຊອບຕໍ່ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ເສຍຫາຍໂດຍຊົດໃຊ້ຄ່າເສຍຫາຍຕາມຄຳຕັດສິນຂອງສານ, ພ້ອມດ້ວຍດອກເບັ້ຍໃນຖານະລູກໜີ້ຜິດນັດໃນອັດຕາ 15% ຕໍ່ປີນັບຈາກວັນທີ່ຜິດນັດເປັນຕົ້ນໄປ.

4.4 ຜູ້ໄດ້ຮັບການປະກັນໄພຕ້ອງແຈ້ງຕໍ່ເຈົ້າໜ້າທີ່ຕຳຫຼວດທັນທີໃນກໍລະນີມີຄວາມສູນເສຍ ຫຼື ເສຍຫາຍຈາກການລັກຊັບສິນ ແລະ ສົ່ງສຳເນົາໃບລາຍງານທີ່ມີລາຍເຊັນ ແລະ ກາປະທັບຂອງເຈົ້າໜ້າທີ່ຕຳຫຼວດໃຫ້ບໍລິສັດ.

### 5. ການຍົກເລີກສັນຍາປະກັນໄພ

5.1. ບໍລິສັດຈະຍົກເລີກສັນຍາປະກັນໄພສະບັບນີ້ໄດ້ດ້ວຍການສົ່ງໜັງສືແຈ້ງບອກລ່ວງໜ້າ 15 ວັນ, ໂດຍທາງຈົດໝາຍລົງທະບຽນສົ່ງເຖິງຜູ້ໄດ້ຮັບການປະກັນໄພຕາມທີ່ຢູ່ສຸດທ້າຍທີ່ແຈ້ງໃຫ້ບໍລິສັດຮູ້, ໃນກໍລະນີນີ້ບໍລິສັດຈະສົ່ງຄືນຄ່າປະກັນໄພໃຫ້ຜູ້ໄດ້ຮັບການປະກັນໄພ,ໂດຍຫັກຄ່າປະກັນໄພຂອງໄລຍະເວລາທີ່ສັນຍາປະກັນໄພໄດ້ຄຸ້ມກັນມາແລ້ວອອກຕາມສັດສ່ວນ.

5.2 ຜູ້ໄດ້ຮັບການປະກັນໄພຈະຍົກເລີກສັນຍາປະກັນໄພໄດ້ໂດຍແຈ້ງໃຫ້ບໍລິສັດຮູ້ເປັນລາຍລັກອັກສອນ ແລະ ມີສິດໄດ້ຮັບຄ່າປະກັນໄພຄືນ, ຫຼັງຈາກຫັກຄ່າປະກັນໄພສຳລັບໄລຍະເວລາທີ່ສັນຍາບັງຄັບໃຊ້ມາແລ້ວອອກຕາມອັດຕາຄິດໄລ່ຄ່າປະກັນໄພໄລຍະສັ້ນດັ່ງຕາຕະລາງລຸ່ມນີ້:

**ຕາຕະລາງຄິດໄລ່ຄ່າປະກັນໄພໄລຍະສັ້ນ**

| ໄລຍະເວລາປະກັນໄພ (ບໍ່ເກີນ/ເດືອນ) | % ຂອງຄ່າປະກັນໄພ 1 ປີ | ໄລຍະເວລາປະກັນໄພ (ບໍ່ເກີນ/ເດືອນ) | % ຂອງຄ່າປະກັນໄພ 1 ປີ |
|---|---|---|---|
| 1 ເດືອນ | 15 % | 7 ເດືອນ | 75 % |
| 2 ເດືອນ | 25 % | 8 ເດືອນ | 80 % |
| 3 ເດືອນ | 35 % | 9 ເດືອນ | 85 % |
| 4 ເດືອນ | 45 % | 10 ເດືອນ | 90 % |
| 5 ເດືອນ | 55 % | 11 ເດືອນ | 95 % |
| 6 ເດືອນ | 65 % | 12 ເດືອນ | 100 % |

## 6. ການຕັດສິນ

ຖ້າຫາກມີຂໍ້ຂັດແຍ້ງເກີດຂຶ້ນກ່ຽວກັບຈຳນວນເງິນຂອງການສູນເສຍ ຫຼື ການເສຍຫາຍທັງສອງຝ່າຍຈະຕ້ອງໄດ້ພ້ອມກັນແຕ່ງຕັ້ງຜູ້ໄກ່ເກ່ຍຂຶ້ນເພື່ອເປັນຜູ້ຕັດສິນ, ຖ້າທັງສອງຝ່າຍຫາກຍັງບໍ່ສາມາດຕົກລົງກັນໄດ້, ແຕ່ລະຝ່າຍກໍ່ຈະເປັນຜູ້ແຕ່ງຕັ້ງຜູ້ໄກ່ເກ່ຍຂອງຕົນຂຶ້ນມາພາຍໃນກຳນົດ 02 ເດືອນ, ຖ້າຝ່າຍໃດຝ່າຍໜຶ່ງຫາກ ຍັງບໍ່ແຕ່ງຕັ້ງຜູ້ໄກ່ເກ່ຍຂອງຕົນພາຍໃນກຳນົດດັ່ງກ່າວ, ຜູ້ໄກ່ເກ່ຍຂອງຝ່າຍທີ່ຖືກແຕ່ງຕັ້ງຂຶ້ນນັ້ນຈະເປັນຜູ້ມີສິດໃນການຕັດສິນເລີຍ.

## 7. ການກຳນົດມູນຄ່າຄ້ຳປະກັນ ແລະ ສິນທົດແທນ

ການປະກັນໄພບໍ່ສາມາດໃຊ້ເປັນເຫດຜົນເພື່ອຫາກຳໄລໃຫ້ແກ່ຜູ້ໄດ້ຮັບການປະກັນໄພ,ການປະກັນໄພຄ້ຳປະກັນໃຫ້ແກ່ຜູ້ໄດ້ຮັບການປະກັນໄພສະເພາະແຕ່ເພື່ອການປົວແປງສິ່ງຂອງທີ່ຖືກເສຍຫາຍຕົວຈິງ ຫຼື ສິ່ງຂອງທີ່ເປັນຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພເອງເທົ່ານັ້ນ. ໃນເມື່ອມີເຫດການເສຍຫາຍເກີດຂຶ້ນ, ບໍ່ໃຫ້ຖືເອົາວົງເງິນທີ່ຄ້ຳປະກັນໄວ້ນັ້ນເປັນຫຼັກຖານສະແດງຊັບສິນ ແລະ ເປັນມູນຄ່າຂອງຊັບສິນທີ່ຖືກເສຍຫາຍ, ຜູ້ໄດ້ຮັບການປະກັນໄພຕ້ອງໄດ້ຫາຫຼັກຖານມາຢັ້ງຢືນ ດ້ວຍວິທີການຕ່າງໆ ຫຼື ດ້ວຍເອກະສານຕາມທີ່ບໍລິສັດຕ້ອງການ, ດັ່ງລາຍລະອຽດລຸ່ມນີ້:

7.1 ມູນຄ່າອາຄານແມ່ນປະເມີນລວມທັງຫ້ອງໃຕ້ດິນ ແລະ ຮາກຖານຂອງອາຄານແຕ່ແຍກເອົາລາຄາຂອງເນື້ອທີ່ດິນອອກ, ຈະຖືກປະເມີນເປັນລາຄາຕົວຈິງຂອງສິ່ງປຸກສ້າງ ແລະ ຖືເອົາເປັນລາຄາທັງໝົດຂອງການກໍ່ສ້າງຄືນໃໝ່ໃນມື້ທີ່ມີເຫດການເສຍຫາຍໂດຍຫັກຄ່າຊຳລຸດຊຸດໂຊມອອກ.

7.2 ມູນຄ່າເຄື່ອງໃຊ້ໃນອາຄານແມ່ນປະເມີນລາຄາຕາມມູນຄ່າເຄື່ອງທີ່ໄດ້ເອົາມາປ່ຽນແທນຄືນໃໝ່, ໃນມື້ທີ່ມີຄວາມເສຍຫາຍເກີດຂຶ້ນໂດຍຫັກຄ່າຊຳລຸດຊຸດໂຊມອອກ.

## 8. ການປະກັນໄພຕ່ຳກວ່າມູນຄ່າຕົວຈິງ

ໃນກໍລະນີທີ່ມີຄວາມເສຍຫາຍເກີດຂຶ້ນ ແລະ ພົບວ່າມູນຄ່າຄ້ຳປະກັນທີ່ໄດ້ເຮັດປະກັນໄພໄວ້ຫາກຕ່ຳກວ່າມູນຄ່າຕົວຈິງຂອງຊັບສິນ, ດັ່ງກໍລະນີລຸ່ມນີ້:

8.1 ກໍລະນີທີ່ຈຳນວນເງິນຂອງມູນຄ່າທີ່ໄດ້ເຮັດປະກັນໄພເທົ່າກັບ ຫຼື ຫຼາຍກວ່າ 70% ຂອງມູນຄ່າຕົວຈິງຂອງຊັບສິນທີ່ໄດ້ເອົາປະກັນໄພ, ໃນເວລາເກີດການເສຍຫາຍບໍລິສັດຈະທົດແທນຄວາມເສຍຫາຍຕາມມູນຄ່າຕົວຈິງຂອງຊັບສິນ, ແຕ່ບໍ່ເກີນຈຳນວນເງິນທີ່ລະບຸໃນສັນຍາ.

8.2 ກໍລະນີທີ່ຈຳນວນເງິນຂອງມູນຄ່າທີ່ໄດ້ເຮັດປະກັນໄພຫາກໜ້ອຍກວ່າ 70% ຂອງມູນຄ່າຕົວຈິງຂອງຊັບສິນທີ່ເອົາປະກັນໄພ, ໃນເວລາເກີດການເສຍຫາຍ ໃຫ້ຖືວ່າຜູ້ໄດ້ຮັບການປະກັນໄພເປັນຜູ້ຮັບຜິດຊອບເອງໃນສ່ວນທີ່ແຕກຕ່າງ ແລະ ໃນເວລາຄິດໄລ່ສິນທົດແທນ, ຜູ້ໄດ້ຮັບການປະກັນໄພຕ້ອງຮັບພາລະສ່ວນສະເລ່ຍຄວາມເສຍຫາຍໄປຕາມສ່ວນທຸກໆລາຍການ ແລະ ຫາກມີຫຼາຍກວ່າໜຶ່ງລາຍການ, ໃຫ້ແຍກພິຈາລະນາເປັນແຕ່ລະລາຍການ, ໂດຍບໍລິສັດ ຈະທົດແທນຄວາມເສຍຫາຍແຕ່ລະລາຍການ, ຕາມຫລັກການຄິດໄລ່ດັ່ງນີ້:

**ຫຼັກການຄິດໄລ່ຄ່າເສຍຫາຍ**

$$\text{ຄ່າເສຍຫາຍທີ່ບໍລິສັດທົດແທນໃນແຕ່ລະລາຍການ} = \left\{ \frac{\text{ມູນຄ່າຄ້ຳປະກັນ} \times \text{ຄ່າເສຍຫາຍທັງໝົດທີ່ໄດ້ຮັບການຄຸ້ມກັນ}}{\text{ມູນຄ່າຕົວຈິງຂອງຊັບສິນ}} \right\} - \text{ມູນຄ່າຄວາມຮັບຜິດຊອບເອງ}$$

## 9. ການປະກັນໄພຊ້ອນ

ຜູ້ໄດ້ຮັບການປະກັນໄພຕ້ອງແຈ້ງໃຫ້ບໍລິສັດຮູ້ໃນກໍລະນີຊັບສິນທີ່ເອົາມາປະກັນຫາກມີປະກັນໄພກັບບໍລິສັດອື່ນ ຫຼື ຈະມີຂຶ້ນພາຍຫຼັງທີ່ໃຫ້ການຄຸ້ມກັນຊັບສິນດຽວກັນ ກັບສັນຍາປະກັນໄພສະບັບນີ້, ບໍ່ວ່າຈະແມ່ນທັງໝົດ ຫຼື ບາງສ່ວນກໍ່ຕາມ. ໃນກໍລະນີທີ່ມີຄວາມເສຍຫາຍເກີດຂຶ້ນ ແລະ ພົບວ່າຊັບສິນທີ່ເອົາມາປະກັນຫາກມີປະກັນ ໄພນຳບໍລິສັດອື່ນ, ບໍ່ວ່າຈະໂດຍຜູ້ໄດ້ຮັບການປະກັນໄພເອງ ຫຼື ໂດຍບຸກຄົນອື່ນທີ່ເຮັດໃນນາມຜູ້ໄດ້ຮັບການປະກັນໄພ, ບໍລິສັດຈະຮ່ວມສະເລ່ຍຊົດໃຊ້ຄ່າເສຍຫາຍ, ຕາມສ່ວນສະເລ່ຍທີ່ບໍລິສັດໄດ້ຮັບຄ້ຳປະກັນທຽບກັບມູນຄ່າຄ້ຳປະກັນທັງໝົດ, ໂດຍຜ່ານການຕົກລົງເຫັນດີລະຫວ່າງຜູ້ໄດ້ຮັບການ ປະກັນໄພ ແລະ ບໍລິສັດ, ບໍລິສັຈະບໍ່ຖືລຳດັບການປະກັນໄພກ່ອນ ຫຼື ຫຼັງໃນການເຂົ້າຮ່ວມຄິດໄລ່ສ່ວນສະເລ່ຍຊົດໃຊ້ຄ່າເສຍຫາຍດັ່ງກ່າວ.

## 10. ສິດ ແລະ ໜ້າທີ່ຂອງບໍລິສັດໃນການຮັກສາສິ້ນສ່ວນຊັບສິນທີ່ໄດ້ຮັບຄວາມເສຍຫາຍ

ໃນກໍລະນີທີ່ມີຄວາມເສຍຫາຍເກີດຂຶ້ນແກ່ຊັບສິນທີ່ເອົາປະກັນໄພ, ຜູ້ໄດ້ຮັບການປະກັນໄພຕ້ອງເກັບຮັກສາສິ້ນສ່ວນຊັບສິນທີ່ໄດ້ຮັບຄວາມເສຍຫາຍ ແລະ ບໍລິສັດ ຕ້ອງໄດ້ປະຕິບັດດັ່ງລຸ່ມນີ້ :

10.1 ຮຽກຮ້ອງໃຫ້ສົ່ງມອບສິ້ນສ່ວນຊັບສິນທີ່ເສຍຫາຍໃຫ້ແກ່ບໍລິສັດ,

10.2 ເຂົ້າຍຶດຖື, ຄອບຄອງ, ສຳຫຼວດ, ຈັດ, ຄັດເລືອກ, ເຄື່ອນຍ້າຍ ຫຼື ຈັດການຢ່າງໃດຢ່າງໜຶ່ງຕໍ່ສິ້ນສ່ວນຊັບສິນທີ່ເສຍຫາຍ,

10.3 ຂາຍ ຫຼື ຈຳໜ່າຍສິ້ນສ່ວນຊັບສິນທີ່ເສຍຫາຍ.

ບໍລິສັດສາມາດຖືສິດທີ່ມີຕາມສັນຍາໄດ້ນັບຕັ້ງແຕ່ເກີດມີຄວາມເສຍຫາຍ,ຈົນກວ່າສິດໃນການຮຽກຮ້ອງຄ່າເສຍຫາຍຈະຕົກລົງກັນໄດ້ ຫຼື ຕ້ອງການແຈ້ງບອກເປັນລາຍລັກອັກສອນຈາກຜູ້ໄດ້ຮັບການປະກັນໄພວ່າ: ສະຫຼະສິດທີ່ຈະຮຽກຮ້ອງຄ່າສິນທົດແທນຕາມສັນຍາປະກັນໄພ.

ໃນການໃຊ້ສິດຂອງບໍລິສັດດັ່ງທີ່ກ່າວມາຂ້າງເທິງນັ້ນ, ຈະບໍ່ມີຜົນເຮັດໃຫ້ບໍລິສັດມີຄວາມຮັບຜິດຊອບເພີ່ມແຕ່ຢ່າງໃດ ແລະ ບໍ່ເຮັດໃຫ້ສິດຂອງບໍລິສັດທີ່ມີຕາມສັນຍາປະກັນໄພໃນການຕໍ່ສູ້ຮຽກຮ້ອງສິດໃດໆຫຼຸດລົງ.

## 11. ການແທນເອົາສິດຂອງຜູ້ໄດ້ຮັບການປະກັນໄພ

ໂດຍຄ່າໃຊ້ຈ່າຍຂອງບໍລິສັດ, ຜູ້ໄດ້ຮັບການປະກັນໄພຕ້ອງປະຕິບັດທຸກມາດຕະການທີ່ຈຳເປັນ ຫຼື ເທົ່າທີ່ບໍລິສັດຮຽກຮ້ອງໃຫ້ປະຕິບັດໃນການທີ່ ບໍລິສັດຈະແທນເອົາສິດຂອງຜູ້ໄດ້ຮັບການປະກັນໄພເພື່ອຮຽກຮ້ອງຄ່າຊົດເຊີຍ ຫຼື ເງິນທົດແທນຄືນຈາກບຸກຄົນທີ່ກໍ່ຄວາມເສຍຫາຍ ຊຶ່ງບໍລິສັດມີສິດຕາມມາດຕາ 82 ຂອງ ກົດໝາຍວ່າດ້ວຍການປະກັນໄພ ໂດຍບໍ່ຖືວ່າການກະທຳນັ້ນຈະກ່ອນ ຫຼື ຫຼັງຈາກທີ່ຜູ້ໄດ້ຮັບ ການປະກັນໄພໄດ້ຮັບຄ່າສິນທົດແທນຈາກບໍລິສັດແລ້ວກໍ່ຕາມ.

## 12. ການປະຕິເສດໃນການຊົດໃຊ້ສິນທົດແທນ.

ບໍລິສັດມີສິດປະຕິເສດໃນການຊົດໃຊ້ຄ່າສິນທົດແທນຄວາມເສຍຫາຍໂດຍບໍ່ສົ່ງຄືນຄ່າປະກັນໄພດັ່ງກໍລະນີລຸ່ມນີ້:

11.1 ຄວາມເສຍຫາຍນັ້ນເກີດຂຶ້ນຍ້ອນ ການເຈດຕະນາທີ່ບໍ່ດີ ຫຼື ຍ້ອນຄວາມປະໝາດເລີ່ນເລີ້ ຢ່າງຮ້າຍແຮງຂອງຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ຮັບຜົນ ປະໂຫຍດ.

11.2 ການສໍ້ໂກງ, ດັ່ງເຫດການລຸ່ມນີ້ :

- 11.2.1 ຄວາມເສຍຫາຍນັ້ນເກີດຂຶ້ນຈາກການກະທຳໂດຍເຈດຕະນາ ຫຼື ການສົມຮູ້ຮ່ວມຄິດຂອງຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ຮັບຜົນປະໂຫຍດ ຫຼື ບຸກຄົນໃດທີ່ກະທຳໃນນາມຂອງຜູ້ເອົາປະກັນໄພ ຫຼື ຜູ້ຮັບຜົນປະໂຫຍດຈາກສັນຍາປະກັນໄພສະບັບນີ້,
- 11.2.2 ທຸກການກະທຳທີ່ສະແດງຂໍ້ຄວາມ ແລະ ເອກະສານທີ່ບໍ່ຖືກຕ້ອງຕາມຄວາມຈິງ, ໂດຍຜູ້ໄດ້ຮັບການປະກັນໄພ ຫຼື ຕົວແທນຂອງຜູ້ໄດ້ຮັບການ ປະກັນໄພ, ເພື່ອໃຫ້ໄດ້ມາເຊິ່ງຜົນປະໂຫຍດຕາມສັນຍາປະກັນໄພສະບັບນີ້.

## 13. ການໂມຄະຂອງສັນຍາປະກັນໄພ

ທຸກໆການແຈ້ງການເທັດ ຫຼື ການແຈ້ງການທີ່ບໍ່ຖືກຕ້ອງຕາມຄວາມຈິງກ່ຽວກັບຊັບສິນທີ່ປະກັນໄພໄວ້ ຫຼື ສະພາບການຕ່າງໆທີ່ເຮັດໃຫ້ຄວາມສ່ຽງໄພເພີ່ມຂຶ້ນ, ເຊິ່ງເປັນຜົນໃນການປະເມີນຄວາມສ່ຽງ ຫຼື ໃນການຄິດໄລ່ຄ່າປະກັນໄພ ຫຼື ມີການປົດບັງຂໍ້ມູນຄວາມຈິງ, ເຖິງວ່າຈະບໍ່ມີຜົນສະທ້ອນຕໍ່ຄວາມເສຍຫາຍກໍ່ຕາມ, ໃຫ້ຖືວ່າສັນຍາປະກັນໄພສະບັບນັ້ນຕົກເປັນໂມຄະທັນທີ, ບໍລິສັດສາມາດປະຕິບັດຕາມມາດຕະການທີ່ໄດ້ກຳນົດໄວ້ໃນມາດຕາ 27 ແລະ 28 ຂອງກົດ ໝາຍວ່າດ້ວຍການປະກັນໄພ.

## 14. <u>ຂໍ້ກຳນົດວ່າດ້ວຍຂໍ້ມູນສ່ວນຕົວ</u>

ຜູ້ປະກັນໄພໄດ້ເກັບກຳ ແລະ ດຳເນີນງານຕໍ່ຂໍ້ມູນສ່ວນບຸກຄົນໂດຍມີຈຸດປະສົງໃນການກະກຽມການສະເໜີລາຄາ, ເງື່ອນໄຂການປະກັນໄພ, ການເກັບຄ່າປະກັນໄພ, ການຈ່າຍສິນທົດແທນປະກັນໄພ ແລະ ສຳລັບຈຸດປະສົງອື່ນໆທີ່ກ່ຽວຂ້ອງໂດຍກົງກັບການປະຕິບັດເງື່ອນໄຂຂອງສັນຍາປະກັນໄພ. ຜູ້ປະກັນໄພແມ່ນຈະຮັກສາຂໍ້ມູນຄວາມລັບຂອງຜູ້ໄດ້ຮັບການປະກັນໄພຢ່າງດີທີ່ສຸດ. ຜູ້ໄດ້ຮັບການປະກັນໄພມີສິດທີ່ຈະເຂົ້າເຖິງຂໍ້ມູນສ່ວນບຸກຄົນທີ່ກ່ຽວຂ້ອງກັບຕົນພ້ອມດຽວກັນນັ້ນຜູ້ໄດ້ຮັບການປະກັນໄພຍັງມີສິດຮ້ອງຂໍໃຫ້ຜູ້ປະກັນໄພປັບປຸງ ຫຼື ລຶບຂໍ້ມູນໃດໜຶ່ງທີ່ຜູ້ໄດ້ຮັບການປະກັນໄພ ເຊື່ອວ່າບໍ່ແນ່ນອນ ຫຼື ໝົດກຳນົດ. ຜູ້ປະກັນໄພຈະບໍ່ເກັບຂໍ້ມູນຂອງຜູ້ໄດ້ຮັບການປະກັນໄພດົນກວ່າຄວາມຈຳເປັນສຳລັບການສະເໜີໃຫ້ເກັບຮັກສາ.

ບໍລິສັດອາດຈະເປີດເຜີຍຂໍ້ມູນສ່ວນບຸກຄົນຂອງທ່ານໃຫ້ກັບຜູ້ອື່ນທີ່ບໍລິສັດມີການຮ່ວມມືທາງທຸລະກິດໂດຍມີຈຸດປະສົງດຽວກັນກັບທີ່ລະບຸໄວ້ໃນວັກຂ້າງເທິງ ຫຼື ເພື່ອໃຫ້ບໍລິສັດສາມາດສະເໜີຜະລິດຕະພັນ ແລະ ການບໍລິການຂອງບໍລິສັດໃຫ້ແກ່ທ່ານ. ພາກສ່ວນເຫລົ່ານີ້ອາດປະກອບມີບັນດາຜູ້ປະກັນໄພ, ຄົນກາງ, ຜູ້ປະກັນໄພຕໍ່, ຖານຂໍ້ມູນການປະກັນໄພ, ບໍລິສັດທີ່ກ່ຽວຂ້ອງ, ທີ່ປຶກສາຂອງບໍລິສັດ, ຜູ້ທີ່ມີສ່ວນກ່ຽວຂ້ອງກັບສິນທົດແທນປະກັນໄພ, ຜູ້ເກັບກຳຂໍ້ມູນສິນທົດແທນປະກັນໄພ ແລະ ຜູ້ກວດສອບພາຍນອກ. ຜູ້ທີ່ມີຮູບແບບການປະກັນໄພໃນສະຖານທີ່ ທີ່ທ່ານໄດ້ຊື້ປະກັນໄພ (ເຊັ່ນ: ນັກການເງິນ ຫຼື ຜູ້ຜະລິດຍານພາຫະນະ ແລະ/ຫຼື ຜູ້ຈຳໜ່າຍ) ອາດມີການເປີດເຜີຍຂໍ້ມູນຕໍ່ລັດຖະບານ, ກົດໝາຍຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ການແກ້ໄຂຂໍ້ຂັດແຍ່ງ, ກົດລະບຽບ ຫຼື ຂໍ້ບັງຄັບຕ່າງໆຕາມກົດໝາຍ.

ບໍລິສັດອາດຈະບັນທຶກການໂທເຂົ້າ ແລະ/ຫຼື ໂທອອກເພື່ອຈຸດປະສົງໃນການທົດສອບຫຼືການກວດສອບ. ບ່ອນທີ່ບໍລິສັດໄດ້ບັນທຶກການໂທ, ບໍລິສັດສາມາດໃຫ້ທ່ານອັດສຳເນົາໄດ້ຕາມຄຳຮ້ອງຂໍຂອງທ່ານ ແລະ ບ່ອນທີ່ເໝາະສົມໃນການຈັດຕັ້ງປະຕິບັດ.

ການທີ່ສະໜອງຂໍ້ມູນສ່ວນຕົວຂອງທ່ານໃຫ້ກັບບໍລິສັດ ແລະ ການທີ່ທ່ານສະໜອງຂໍ້ມູນຂອງຄົນອື່ນໃຫ້ບໍລິສັດ, ຂໍ້ຕົກລົງດັ່ງກ່າວແມ່ນຈະຖືກນຳໃຊ້ ແລະ ເປີດເຜີຍໄດ້ກໍຕໍ່ເມື່ອທ່ານໄດ້ບອກບໍລິສັດ. ຖ້າທ່ານຕ້ອງການຍົກເລີກການຕົກລົງຂອງທ່ານເຊິ່ງລວມມີສິ່ງຂອງທີ່ຮັບຂໍ້ມູນດ້ານຜະລິດຕະພັນ ແລະ ຂໍ້ສະເໜີໂດຍບໍລິສັດ ຫຼື ບຸກຄົນທີ່ມີຄວາມກ່ຽວຂ້ອງບໍລິສັດ, ກະລຸນາຕິດຕໍ່ຫາບໍລິສັດພວກເຮົາ.

## 15. <u>ເງື່ອນໄຂເພີ່ມເຕີມ</u>

ເງື່ອນໄຂທົ່ວໄປ ແລະ ໃບເງື່ອນໄຂສະເພາະປະກອບກັນເປັນສັນຍາປະກັນໄພ, ຂໍ້ຄວາມໃດໆທີ່ມີຄວາມໝາຍສະເພາະໃນສ່ວນໃດສ່ວນໜຶ່ງຂອງສັນຍາ ຈະມີຄວາມໝາຍສະເພາະຕາມທີ່ກຳນົດໄວ້.

## <u>ພາກທີ 1</u> : ການປະກັນໄພຊັບສິນ

ໂດຍອີງຕາມໃບສະເໜີເຮັດປະກັນໄພເຊິ່ງເປັນສ່ວນໜຶ່ງຂອງສັນຍາປະກັນໄພ ແລະ ເພື່ອເປັນການຕອບແທນຄ່າປະກັນໄພທີ່ຜູ້ໄດ້ຮັບການປະກັນໄພໄດ້ຈ່າຍຄ່າປະກັນໄພພາຍໃຕ້ເງື່ອນໄຂທົ່ວໄປ, ຂໍ້ຄຸ້ມກັນ, ຂໍ້ຍົກເວັ້ນ ແລະ ເອກະສານທີ່ຄັດຕິດກັບສັນຍາ. ບໍລິສັດມີສັນຍາກັບຜູ້ໄດ້ຮັບການປະກັນໄພວ່າ: ຫາກຊັບສິນທີ່ໄດ້ຮັບການປະກັນໄພໄວ້ໄດ້ຮັບຄວາມເສຍຫາຍເນື່ອງຈາກເຫດການທີ່ໄດ້ຮັບການຄຸ້ມກັນ, ບໍລິສັດຈະຈ່າຍຄ່າທົດແທນຕາມມູນຄ່າຄວາມເສຍຫາຍຕົວຈິງ ຫຼື ສ້ອມແປງໃຫ້ຄືນສູ່ສະພາບເດີມ ຫຼື ຈັດຫາຊັບສິນມາທົດແທນຊັບສິນທີ່ໄດ້ຮັບຄວາມເສຍຫາຍທັງໝົດ ຫຼື ບາງສ່ວນ, ແຕ່ການຈ່າຍຄ່າສິນທົດແທນຕ້ອງບໍ່ເກີນວົງເງິນຕາມທີ່ລະບຸໃນໃບເງື່ອນໄຂສະເພາະ.

**<u>ຄຳນິຍາມ:</u>**

**ອາຄານ :** ໝາຍເຖິງ ສິ່ງປຸກສ້າງເຊັ່ນ : ເຮືອນ, ບ່ອນຈອດລົດ, ເຮືອນຄົວ, ເຮືອນພັກຄົນຮັບໃຊ້ໃນເຮືອນ (ຍົກເວັ້ນກຳແພງຮົ້ວ ແລະ ປະຕູຮົ້ວ)

**ເຄື່ອງໃຊ້ໃນເຮືອນ :** ໝາຍເຖິງ ເຟີນີເຈີ້, ເຄື່ອງຕົບແຕ່ງເຮືອນ, ສິ່ງຕິດຕັ້ງໃນເຮືອນ, ເຄື່ອງມື, ເຄື່ອງໃຊ້, ເຄື່ອງໄຟຟ້າ, ເຄື່ອງຄົວກິນ, ເຄື່ອງນຸ່ງຮົ່ມຂອງຜູ້ໄດ້ ຮັບການປະກັນໄພ ຫຼື ຂອງສະມາຊິກໃນຄອບຄົວຂອງຜູ້ໄດ້ຮັບການປະກັນໄພ.

## <u>ການຄຸ້ມກັນສຳລັບພາກທີ 1 ການປະກັນໄພຊັບສິນ</u>

**1.<u>ການຄຸ້ມກັນຄວາມເສຍຫາຍຈາກອັກຄີໄພ</u>** ໝາຍເຖິງ ການຄຸ້ມກັນຄວາມເສຍຫາຍຈາກໄຟໄໝ້ ຫຼື ຟ້າຜ່າ ຫຼື ການລະເບີດຂອງອາຍແກັສທີ່ໃຊ້ເພື່ອແສງສະຫວ່າງສຳລັບທີ່ຢູ່ອາໃສ ຫຼື ເພື່ອຄົວກິນ.

**2.<u>ການຄຸ້ມກັນຄວາມເສຍຫາຍຈາກນໍ້າ</u>** ໝາຍເຖິງ ການຄຸ້ມກັນຄວາມເສຍຫາຍຕໍ່ຊັບສິນທີ່ໄດ້ຮັບການປະກັນໄພເຊິ່ງຖືກຜົນກະທົບໂດຍກົງຍ້ອນອຸບັດຕິເຫດຈາກການແຕກຂອງຖັງໃສ່ນໍ້າ ຫຼື ນໍ້າລົ້ນຈາກຖັງໃສ່ນໍ້າ, ການແຕກຂອງອຸປະກອນໃຊ້ນໍ້າ ຫຼື ຈາກທໍ່ນໍ້າຢູ່ພາຍໃນອາຄານທີ່ໄດ້ຮັບການປະກັນໄພ. ປະກັນໄພນີ້ຍັງ ໄດ້ຂະຫຍາຍການຄຸ້ມກັນຄວາມເສຍຫາຍເຊິ່ງມີຜົນກະທົບໂດຍກົງຈາກແຜ່ນດິນໄຫວ, ພາຍຸໃຫຍ່, ລົມຫົວກຸດ ແລະ ພາຍຸລົມແດງ ລວມທັງຄວາມເສຍຫາຍຈາກນໍ້າຝົນທີ່ຖືກພັດໄຫຼເຂົ້າໃນອາຄານໂດຍຜ່ານທາງຫຼັງຄາ ຫຼື ຝາຂອງອາຄານທີ່ຖືກຜົນກະທົບໂດຍກົງຈາກເຫດການທີ່ກ່າວມານີ້. ທັນທີ ທີ່ອຸບັດຕິເຫດເກີດຂຶ້ນ ການຄຸ້ມກັນຈະຖືກໂຈະຈົນກວ່າການສ້ອມແປງຈະສຳເລັດ ແລ້ວການຄຸ້ມກັນຈຶ່ງຈະກັບມາມີຜົນຄືນໃໝ່. ປະກັນໄພນີ້ບໍ່ຄຸ້ມກັນຄວາມເສຍຫາຍຕໍ່ອາຄານ ຫຼື ຊັບສິນອື່ນໆ ຈາກໄພນໍ້າຖ້ວມ ຫຼື ຄວາມເສຍຫາຍໃນໄລຍະເວລາທີ່ອາຄານບໍ່ມີຄົນອາໃສຢູ່ເປັນເວລາຫຼາຍກ່ວາ 90 ວັນຕິດຕໍ່ກັນ.

**3.<u>ການຄຸ້ມກັນແກ້ວແວ່ນແຕກ</u>** ໝາຍເຖິງ ການຄຸ້ມກັນການແຕກຈາກອຸບັດຕິເຫດຂອງແກ້ວທີ່ເປັນພາກສ່ວນໜຶ່ງຂອງອາຄານ, ການປະກັນໄພນີ້ຈະບໍ່ຄຸ້ມກັນຄວາມເສຍຫາຍຕໍ່ສີທາ, ຕໍ່ຕົວໜັງສື ຫຼື ລາຍຄວັດໃສ່ໃນແກ້ວ ແລະ ຄວາມເສຍຫາຍໃນເວລາປະກອບໃສ່ ຫຼື ມ້າງອອກຈາກຕົວອາຄານ.

**4. <u>ການຄຸ້ມກັນການລັກ</u>** ໝາຍເຖິງ ການຄຸ້ມກັນຄວາມເສຍຫາຍ, ດັ່ງລຸ່ມນີ້ :

4.1 ຄຸ້ມກັນຄວາມສູນເສຍ ຫຼື ເສຍຫາຍຕໍ່ຊັບສິນທີ່ໄດ້ຮັບການປະກັນໄພອັນເນື່ອງມາຈາກການລັກ ຫຼື ພະຍາຍາມລັກໂດຍບຸກຄົນອື່ນເຊິ່ງໄດ້ເຂົ້າ ຫຼື ອອກຈາກສະຖານທີ່ທີ່ໄດ້ຮັບການປະກັນໄພໂດຍການງັດແງະ, ມ້າງເພດ້ວຍເຄື່ອງມື, ດ້ວຍການລະເບີດ, ດ້ວຍເຄື່ອງອຸປະກອນໄຟຟ້າ, ດ້ວຍສານເຄມີ ຫລື ດ້ວຍການປຸ້ນຈີ້, ທຳຮ້າຍຮ່າງກາຍ ຈົນມີຮ່ອງຮອຍທີ່ເຫັນໄດ້ຢ່າງຊັດເຈນໃນອາຄານທີ່ໄດ້ຮັບການປະກັນໄພ.

4.2 ຄຸ້ມກັນຄວາມເສຍຫາຍຕໍ່ອາຄານອັນເນື່ອງມາຈາກການກະທຳທີ່ຄຸ້ມກັນຕາມຂໍ້ 4.1 ຂ້າງເທິງນີ້, ຄວາມເສຍຫາຍຕໍ່ປະຕູ, ຕໍ່ປ່ອງຢ້ຽມ, ໄລປະຕູ, ແກ້ວແວ່ນ ຫຼື ສ່ວນໃດໆຂອງອາຄານ, ບໍລິສັດຈະທົດແທນຄ່າສ້ອມແປງຕາມຕົວຈິງແຕ່ບໍ່ເກີນ 10 ລ້ານກີບ ຕໍ່ຄວາມເສຍຫາຍໃນແຕ່ລະຄັ້ງ.

**5 <u>ການຄຸ້ມກັນຄວາມເສຍຫາຍຕໍ່ເຄື່ອງໃຊ້ໄຟຟ້າ</u>** ໝາຍເຖິງ ຄຸ້ມກັນຄວາມເສຍຫາຍຕໍ່ເຄື່ອງໃຊ້ໄຟຟ້າເນື່ອງຈາກການລັດວົງຈອນຂອງໄຟຟ້າ, ການເຜົາໄໝ້ຂອງສາຍໄຟໃນຕົວມັນເອງ ຫຼື ການລັດວົງຈອນຍ້ອນຟ້າຜ່າ ແຕ່ບໍ່ໃຫ້ການຄຸ້ມກັນອຸປະກອນທີ່ມີອາຍຸໃຊ້ງານເກີນ 08 ປີ ແລະ ຄວາມເສຍຫາຍຈາກການຫຼຸ້ຍຫ້ຽນຂອງອຸປະກອນເຄື່ອງໃຊ້ໄຟຟ້າ.

## ຂໍ້ຍົກເວັ້ນຂອງພາກທີ 1:

ການປະກັນໄພນີ້ຈະບໍ່ຄຸ້ມກັນເຫດການ, ດັ່ງຕໍ່ໄປນີ້ :

1. **ຄວາມເສຍຫາຍ** ທີ່ເກີດຂື້ນເຊິ່ງມີຜົນກະທົບໂດຍກົງ ຫຼື ທາງອ້ອມຈາກສົງຄາມ, ການຮຸກຮານ, ການກະທຳທີ່ເປັນສັດຕູ ຫຼື ສົງຄາມ ( ປະກາດ ຫຼື ບໍ່ປະກາດ ກໍ່ຕາມ), ສົງຄາມກາງເມືອງ, ການກໍ່ການຈະລາຈົນ, ການກໍ່ຄວາມວຸ້ນວາຍ, ການນັດຢຸດງານ, ການລຸກຮືຂື້ນຈາກຝ່າຍພົນລະເຮືອນ ຫຼື ທະຫານ, ການກະບົດ, ການເຄື່ອນໄຫວແບບກໍ່ການຮ້າຍ, ການປະຕິວັດ, ການປະກາດກົດໄອຍະການເສິກ.

2. **ຄວາມເສຍຫາຍທີ່ເປັນຜົນໂດຍກົງ ຫຼື ທາງອ້ອມຈາກສາເຫດດັ່ງລຸ່ມນີ້ :**
   - 2.1 ນ້ຳຖ້ວມ ຫຼື ນ້ຳທີ່ຊຶມຜ່ານຝາ, ພື້ນ ຫຼືຫ້ອງໃຕ້ດິນ
   - 2.2 ຄວາມເສຍຫາຍເກີດຈາກການບົ່ມໝັກ, ເກີດຈາກຄວາມຮ້ອນຕາມທຳມະຊາດ, ການເຜົາໄໝ້ດ້ວຍຕົວມັນເອງຂອງຊັບສິນທີ່ປະກັນໄພໄວ້ ຫຼືໃນລະຫ່ວາງການໃຊ້ຄວາມຮ້ອນ ຫຼືການຜະລິດ.
   - 2.3 ແຜ່ນດິນຢຸບ ຫຼື ດິນເຈື່ອນ
   - 2.4 ຄວາມເສຍຫາຍຈາກການເຜົາຊັບສິນບັດໂດຍຄຳສັ່ງຂອງເຈົ້າໜ້າທີ່ລັດຖະການ.
   - 2.5 ໄຟ້ໄໝ້ປ່າ, ການຈູດປ່າ ຫຼື ການເຜົາປ່າເພື່ອຖາງພື້ນທີ່.
   - 2.6 ການແຜ່ລັງສີ ຫຼື ການປົ່ນເປື້ອນກຳມັນຕະພາບລັງສີຈາກພະລັງນິວເຄຼຍ ຫຼື ຈາກການຕິກຕະກອນຂອງນິວເຄຼຍ, ການເຜົາໄໝ້ຂອງພະລັງນິວເຄຼຍ ຫຼື ຈາກການແຕກຂອງພະລັງນິວເຄຼຍ.
   - 2.7 ອາວຸດນິວເຄຼຍ,
   - 2.8 ລະເບີດທີ່ເປັນສານພິດກຳມັນຕະພາບລັງສີ ຫຼືວັດຖຸອັນຕະລາຍປະກອບເປັນລະເບີດນິວເຄຼຍ ຫຼືສ່ວນປະກອບຕ່າງໆຂອງນິວເຄຼຍ.
   - 2.9 ຊັບສິນບັດທີ່ຖືກລັກໃນລະຫວ່າງ ແລະ ພາຍຫຼັງການເກີດອັກຄີໄພ.

3. **ຊັບສິນທີ່ບໍ່ໄດ້ຮັບການຄຸ້ມກັນໃນສັນຍາປະກັນໄພນີ້, ເວັ້ນແຕ່ໄດ້ມີການຕົກລົງແລະຖືກລະບຸໄວ້ໃນສັນຍາ:**
   - 3.1 ວັດຖຸມີຄ່າເຊັ່ນ: ເງິນ, ຄຳ, ແກ້ວປະເສີດ, ເພັດ, ພອຍ ຫຼື ໂລຫະມີຄ່າຕ່າງໆ.
   - 3.2 ວັດຖຸບູຮານ ຫຼື ສິນລະປະວັດຖຸ, ທີ່ມີມູນຄ່າເປັນເງິນລວມກັນເກີນກວ່າ 30% ຂອງມູນຄ່າຄ້ຳປະກັນກ່ຽວກັບອຸປະກອນເຄື່ອງໃຊ້ໃນອາຄານ ຫຼື ມີມູນຄ່າຫຼາຍກວ່າ 10 ລ້ານ ກີບ.
   - 3.3 ສິນຄ້າ ຫຼື ຊັບສິນທີ່ຖືກຝາກໄວ້ ຫຼື ເກັບຮັກສາໄວ້ ຫຼືໃນການດູແລຂອງຜູ້ໄດ້ຮັບການປະກັນໄພ.
   - 3.4 ເອກະສານຕົ້ນສະບັບ, ແຜນຜັງ, ແບບແຕ້ມ, ແມ່ພິມ,
   - 3.5 ໃບຮຸ້ນ, ໃບໜີ້ສິນ, ເອກະສານສຳຄັນຕ່າງໆ, ສະແຕມ, ເງິນຫລຽນ, ທະນາບັດ, ເງິນສົດ, ແຊັກ, ປື້ມບັນຊີເງິນຝາກ ແລະ ເອກະສານຕ່າງໆກ່ຽວກັບການບັນຊີ
   - 3.6 ວັດຖຸລະເບີດ ຫຼື ອາວຸດ.
   - 3.7 ຍານພາຫານະ (ລົດທຸກຊະນິດ, ພາຫານະທາງນ້ຳ, ທາງອາກາດ).
   - 3.8 ສັດ, ສັດລ້ຽງ, ພືດສວນ, ຕົ້ນໄມ້, ສິ່ງຂອງຈັດແຕ່ງສວນສະໜາມຫຍ້າ.
   - 3.9 ກຳແພງຮົ້ວ, ປະຕູຮົ້ວ, ປ້າຍ, ຊັບສິນໃນລະຫວ່າງການເຄື່ອນຍ້າຍຫຼືຂົນສົ່ງ.
   - 3.10 ອຸປະກອນເອເລັກໂຕຣນິກແບບພົກພາທຸກຊະນິດລວມມີ ແຕ່ບໍ່ຈຳກັດສະເພາະ ຄອມພິວເຕີກະເປົາຫິ້ວ, ໂທລະສັບມືຖື, ແທັບເລັດ, ກ້ອງຖ່າຍຮູບ, ກ້ອງວີດີໂອ ແລະອື່ນໆ
   - 3.11 ຊັບສິນຕິດຕັ້ງຢູ່ນອກອາຄານ, ຊັບສິນຫຼືສິນຄ້າທີ່ເກັບ ຫຼື ປະໄວ້ໃນສະຖານທີ່ກາງແຈ້ງ ຫຼື ໃນອາຄານຝາເປີດ (ຍົກເວັ້ນຊັບສິນທີ່ຕິດກັບອາຄານທີ່ໄດ້ຮັບການປະກັນໄພ ແລະ ມູນຄ່າຂອງຊັບສິນດັ່ງກ່າວໄດ້ຖືກລວມເຂົ້າໃນມູນຄ່າຄ້ຳປະກັນ ແລະ ການຄຸ້ມກັນແມ່ນຈຳກັດສະເພາະຄວາມສູນເສຍ ຫຼື ເສຍຫາຍຈາກອັກຄີໄພເທົ່ານັ້ນ).
   - 3.12 ຊັບສິນບັດທີ່ໄດ້ຮັບຄວາມເສຍຫາຍ ຫຼື ຖືກທຳລາຍຈາກແຮງດັນ ຫຼື ການສັ່ນສະເທືອນຂອງແຮງລະເບີດ.
   - 3.13 ສະລອຍນ້ຳ.
   - 3.14 ຄວາມເສຍຫາຍສືບເນື່ອງທຸກຢ່າງ.

## <u>ພາກທີ 2</u>: ການປະກັນໄພຄວາມຮັບຜິດຊອບຂອງຫົວໜ້າຄອບຄົວ ແລະ ຄວາມຮັບຜິດຊອບຕໍ່ເຮືອນຂ້າງຄຽງ

ບໍລິສັດຈະຈ່າຍຄ່າທົດແທນຕາມຈຳນວນຄ່າເສຍຫາຍຕົວຈິງແຕ່ບໍ່ເກີນຈຳນວນເງິນທີ່ລະບຸໃນໃບເງື່ອນໄຂສະເພາະຊຶ່ງຜູ້ໄດ້ຮັບການປະກັນໄພຈະຕ້ອງຮັບຜິດຕາມກົດໝາຍສຳລັບ:

1.ຄວາມຮັບຜິດຊອບຂອງຫົວໜ້າຄອບຄົວສຳລັບການເສຍຊີວິດ, ຄວາມບາດເຈັບຕໍ່ຮ່າງກາຍໂດຍອຸບັດຕິເຫດລວມທັງຄວາມເສຍຫາຍຕໍ່ຊັບສິນຂອງ ບຸກຄົນພາຍນອກ.

2.ຄວາມຮັບຜິດຊອບຕໍ່ເຮືອນຂ້າງຄຽງສຳລັບຄວາມເສຍຫາຍຈາກອັກຄີໄພ ທີ່ມີສາເຫດມາຈາກ ຫຼື ໄຟລາມມາຈາກອາຄານທີ່ໄດ້ຮັບການປະກັນໄພ ໃນສັນຍານີ້.

ທັງນີ້ບໍ່ລວມເຖິງການຂາດຜົນປະໂຫຍດຈາກການໃຊ້ຊັບສິນຂອງບຸກຄົນພາຍນອກ ແລະ ບໍລິສັດຈະເປັນຜູ້ດຳເນີນການໃນນາມຂອງຜູ້ໄດ້ຮັບການປະກັນໄພ. ບໍລິສັດຈະຮັບຜິດຊອບສະເພາະແຕ່ອຸບັດຕິເຫດທີ່ເກີດຂື້ນໃນໄລຍະເວລາປະກັນໄພ ແລະ ຜູ້ໄດ້ຮັບການປະກັນໄພໄດ້ຖືກຮຽກຮ້ອງໃຫ້ຮັບຜິດຊອບສຳລັບການເສຍຊີວິດ, ຄວາມບາດເຈັບຕໍ່ຮ່າງກາຍໂດຍອຸບັດຕິເຫດລວມທັງຄວາມເສຍຫາຍຕໍ່ຊັບສິນຂອງບຸກຄົນພາຍນອກເທົ່ານັ້ນ. ໂດຍຄ່າໃຊ້ຈ່າຍຂອງບໍລິສັດ, ບໍລິສັດ ຈະເປັນຜູ້ສືບສວນ ແລະ ຕົກລົງຮັບໃຊ້ຄ່າທົດແທນຕາມຄວາມເປັນຈິງ.

## ຄຳນິຍາມ:

**1.ຜູ້ໄດ້ຮັບການປະກັນໄພ** ໝາຍເຖິງ ບຸກຄົນທີ່ໄດ້ຖືກລະບຸຊື່ເປັນຜູ້ໄດ້ຮັບການປະກັນໄພຢູ່ໃນສັນຍາເຊິ່ງລວມມີ:
- 1.1 ບຸກຄົນພາຍໃນຄອບຄົວດຽວກັນກັບຜູ້ໄດ້ຮັບການປະກັນໄພໄດ້ແກ່: ຜົວ ຫຼື ເມຍ, ພໍ່, ແມ່ ແລະ ລູກ (ອາຍຸບໍ່ເກີນ 18 ປີ) ທີ່ອາໄສຢູ່ໃນຄອບຄົວດຽວ ກັນກັບຜູ້ໄດ້ຮັບການປະກັນໄພ,
- 1.2 ຄົນຮັບໃຊ້ໝາຍເຖິງ ບຸກຄົນທີ່ເປັນລູກຈ້າງຂອງຜູ້ໄດ້ຮັບການປະກັນໄພຊຶ່ງມີໜ້າທີ່ກ່ຽວກັບການຮັບໃຊ້ໃນເຮືອນທີ່ໄດ້ຮັບການປະກັນໄພ

**2. ເຮືອນຂ້າງຄຽງ** ໝາຍເຖິງ ສິ່ງປຸກສ້າງ ແລະ ຊັບສິນບັດທີ່ຢູ່ອ້ອມຮອບອາຄານທີ່ໄດ້ຮັບການປະກັນໄພ, ເຊິ່ງບໍ່ແມ່ນຊັບສິນບັດຂອງຜູ້ໄດ້ຮັບການປະກັນໄພ

## ຂໍ້ຍົກເວັ້ນຂອງພາກທີ 2:

ການປະກັນໄພນີ້ບໍ່ຄຸ້ມກັນຄວາມຮັບຜິດຊອບອັນເກີດຈາກເຫດການ ດັ່ງຕໍ່ໄປນີ້ :

1. ຄວາມຮັບຜິດຊອບທີ່ກ່ຽວຂ້ອງໂດຍກົງ ຫຼື ທາງອ້ອມຈາກການປະກອບກິດຈະກຳການຄ້າ ຫຼື ທຸລະກິດ ຫຼື ວຽກງານທີ່ຜູ້ໄດ້ຮັບການປະກັນໄພ ເຮັດເປັນອາຊີບ,
2. ຊັບສິນທີ່ເຊົ່າ ຫຼື ຢູ່ພາຍໃຕ້ການດູແລຮັກສາ ຫຼື ເປັນຂອງຜູ້ໄດ້ຮັບການປະກັນໄພ.
3. ການກະທຳໂດຍເຈດຕະນາຂອງຜູ້ໄດ້ຮັບການປະກັນໄພ.
4. ການເສຍຊີວິດ, ການບາດເຈັບ, ການເຈັບປ່ວຍ, ການຕິດພະຍາດຂອງລູກຈ້າງຂອງຜູ້ໄດ້ຮັບການປະກັນໄພ ຫຼື ການຮຽກຮ້ອງຄ່າເສຍຫາຍໃດໆ ທີ່ເກີດຂື້ນໃນເວລາປະຕິບັດງານ.
5. ການເສຍຊີວິດ, ການບາດເຈັບ, ການເຈັບປ່ວຍຂອງຜູ້ໄດ້ຮັບການປະກັນໄພ ຫຼື ບຸກຄົນພາຍໃນຄອບຄົວ.
6. ການຮັບຜິດຊອບໃດໆທີ່ເກີດຈາກການຕັດສິນຄະດີຂອງສານ ຫຼື ຂອງຂະບວນການຍຸດຕິທຳທີ່ຢູ່ຕ່າງປະເທດ.

7. ຄວາມຮັບຜິດຊອບເຊິ່ງເກີດຈາກການເປັນເຈົ້າຂອງ, ການຄອບຄອງ, ການດູແລ, ການຄວບຄຸມການໃຊ້ຍານພາຫານະທຸກຊະນິດທີ່ໃຊ້ດ້ວຍເຄື່ອງຈັກລວມທັງເຄື່ອງຈັກຕ່າງໆທີ່ໃຊ້ຊຸກ ຫຼື ລາກ.
8. ຄວາມຮັບຜິດຊອບເຊິ່ງເກີດຈາກ ຫຼື ກ່ຽວເນື່ອງຈາກ ຫຼື ມີຜົນກະທົບໂດຍກົງ ຫຼື ທາງອ້ອມຈາກນ້ຳຖ້ວມ, ນ້ຳເປື້ອນ, ສານເຄມີ, ຝຸ່ນ, ຄວັນ, ອາຍພິດຂອງແຫຼວ ຫຼື ຂອງແຂງທີ່ເປັນພິດ.
9. ຄວາມຮັບຜິດຊອບທີ່ເກີດຈາກສັນຍາທີ່ຜູ້ໄດ້ຮັບການປະກັນໄພໄດ້ເຮັດຂຶ້ນຕື່ມກັບບຸກຄົນທີ່ສາມ.
10. ການປັບໄໝທາງແພ່ງ, ທາງອາຍາ ຫຼື ໂດຍສັນຍາ.
11. ຄວາມຮັບຜິດຊອບບໍ່ວ່າໃນລັກສະນະໃດໆອັນເກີດຈາກ ຫຼື ກ່ຽວເນື່ອງຈາກ ຫຼື ມີຜົນກະທົບໂດຍກົງ ຫຼື ທາງອ້ອມຈາກ:
    - 11.1 ການຮຸກຮານ, ການກະທຳຂອງສັດຕູຕ່າງຊາດ ຫຼື ສົງຄາມ ( ປະກາດ ຫຼື ບໍ່ປະກາດ ) ກໍ່ຕາມ, ສົງຄາມກາງເມືອງ.
    - 11.2 ການກໍ່ການຈະລາຈົນ, ການກໍ່ຄວາມວຸ້ນວາຍ, ການນັດຢຸດງານ, ການລຸກຮື້ຂຶ້ນຈາກຝ່າຍພົນລະເຮືອນ ຫຼື ທະຫານ, ການກະບົດ, ການເຄື່ອນໄຫວແບບກໍ່ການຮ້າຍ, ການປະຕິວັດ, ການປະກາດກົດໄອຍະການເສິກ.
    - 11.3 ການຍຶດ, ການເກນ, ການທຳຮ້າຍ ຫຼື ການທຳຄວາມເສຍຫາຍແກ່ຊັບສິນບັດໂດຍຄຳສັ່ງຂອງເຈົ້າໜ້າທີ່ລັດຖະການ.
    - 11.4 ອາວຸດນິວເຄຼຍ, ການແຜ່ລັງສີ ຫຼື ແຜ່ກຳມັນຕະພາບລັງສີ ຫຼື ການຕົກຕະກອນ ຫຼື ການເຜົາໄໝ້ ຫຼື ການແຕກຂອງພະລັງນິວເຄຼຍ.

## ຂໍ້ຍົກເວັ້ນພິເສດສຳລັບພາກທີ 1 ແລະ ພາກທີ່ 2 ຂອງສັນຍາປະກັນໄພນີ້

### ຂໍ້ຍົກເວັ້ນໄພທາງຄອມພິວເຕີ້ (NMA 2915 – 25/01/2001)

1. ຂໍ້ຍົກເວັ້ນຂໍ້ມູນທາງລະບົບອີເລັກໂທຣນິກ

ເຖິງວ່າມີຂໍ້ກຳນົດໃດໆທີ່ຂັດກັນໃນສັນຍາປະກັນໄພນີ້ ຫຼື ໃນເອກະສານຊ້ອນທ້າຍຂອງສັນຍາ ແມ່ນໄດ້ຕົກລົງ ແລະເຂົ້າໃຈນຳກັນດັ່ງຕໍ່ໄປນີ້:

ກ) ສັນຍາປະກັນໄພນີ້ບໍ່ຄຸ້ມກັນຄວາມສູນເສຍຫຼືເສຍຫາຍ, ຖືກທຳລາຍ, ບິດເບືອນ, ຂໍ້ມູນຖືກລຶບ, ການສໍ້ໂກງ ຫຼື ປ່ຽນແປງ ຂໍ້ມູນທາງອີເລັກໂທຣນິກຈາກສາເຫດໃດກໍ່ຕາມ (ລວມທັງແຕ່ບໍ່ຈຳກັດສະເພາະໄວລັດທາງຄອມພິວເຕີ້) ຫຼື ຄວາມສູນເສຍ ການໃຊ້ວຽກ, ລະບົບການເຮັດວຽກຫຼຸດລົງ, ມູນຄ່າ, ຄ່າໃຊ້ຈ່າຍໃດໆທີ່ກ່ຽວຂ້ອງໂດຍບໍ່ຄຳນຶງວ່າສາເຫດ ຫຼື ເຫດການອື່ນໃດທີ່ເກີດພ້ອມກັນ ຫຼື ໃນລຳດັບໃດໆຕໍ່ຄວາມສູນເສຍນັ້ນ.

ຂໍ້ມູນທາງລະບົບອີເລັກໂທຣນິກ ໝາຍເຖິງ ຂໍ້ເທັດຈິງ, ແນວຄິດ ແລະ ຂໍ້ມູນ ປ່ຽນເປັນຮູບແບບ ທີ່ສາມາດໃຊ້ໄດ້ສຳລັບການສື່ສານ, ການແປຄວາມໝາຍ ຫຼື ການປະມວນຜົນໂດຍການປະເມີນຜົນຂໍ້ມູນອີເລັກໂທຣນິກແລະໄຟຟ້າ ຫຼື ອຸປະກອນຄວບຄຸມ ອີເລັກໂທຣນິກ ແລະ ລວມທັງໂປຣແກຣມຊອຟແວ ແລະ ການແນະນຳລະຫັດອື່ນໆ ສຳລັບການປະເມີນຜົນ ແລະ ການຈັດການຂອງຂໍ້ມູນ ຫຼື ທິດທາງແລະການຈັດການຂອງອຸປະກອນດັ່ງກ່າວ.

ໄວລັດຄອມພິວເຕີ້ໝາຍເຖິງ ຊຸດຄຳສັ່ງຫຼືລະຫັດທີ່ສ້າງຄວາມເສຍຫາຍ, ເປັນອັນຕະລາຍ ຫຼື ຢ່າງອື່ນທີ່ບໍ່ໄດ້ຮັບອະນຸຍາດ ລວມທັງຊຸດຄຳສັ່ງ ຫຼື ລະຫັດທີ່ບໍ່ໄດ້ຮັບອະນຸຍາດທີ່ມີເຈດຕະນາຮ້າຍນຳໂປຣແກຣມ ຫຼື ຢ່າງອື່ນທີ່ເຜີຍແຜ່ໂດຍມັນເອງຜ່ານລະບົບຄອມພິວເຕີ້ຫຼືເຄືອຂ່າຍໃດໆກໍ່ຕາມ. ໄວລັດຄອມພິວເຕີ້ລວມເຖິງແຕ່ບໍ່ຈຳກັດສະເພາະ “Trojan Horses“,“worms“ and “time or logic bombs“.

ຂ) ຢ່າງໃດກໍ່ຕາມ ໃນກໍລະນີໄພທີ່ລະບຸລຸ່ມນີ້ທີ່ມີຜົນມາຈາກເຫດການທີ່ໄດ້ລະບຸໃນ ຂໍ້ ກ) ເທິງນີ້, ໂດຍອີງຕາມເງື່ອນໄຂ, ຂໍ້ກຳນົດ ແລະ ຂໍ້ຍົກເວັ້ນສັນຍາປະກັນໄພນີ້ຈະໃຫ້ການຄຸ້ມກັນຄວາມເສຍຫາຍດ້ານວັດຖຸທີ່ເກີດຂຶ້ນໃນໄລຍະເວລາປະກັນໄພຂອງຊັບສິນທີ່ໄດ້ຮັບການປະກັນໄພໃນ ສັນຍານີ້ ໂດຍສາເຫດຈາກ:

- ອັກຄີໄພ
- ການລະເບີດ

2. ການປະເມີນແລະປະມວນຜົນຂໍ້ມູນສື່ອີເລັກໂທຣນິກ

ເຖິງວ່າມີຂໍ້ກຳນົດໃດໆທີ່ຂັດກັນໃນສັນຍາປະກັນໄພນີ້ ຫຼື ໃນເອກະສານຊ້ອນທ້າຍຂອງສັນຍາ ແມ່ນໄດ້ຕົກລົງ ແລະເຂົ້າໃຈນຳກັນດັ່ງຕໍ່ໄປນີ້:

ຖ້າການປະເມີນຜົນຂໍ້ມູນສື່ອີເລັກໂທຣນິກທີ່ໄດ້ຮັບການປະກັນໄພໃນສັນຍາປະກັນໄພນີ້ໄດ້ຮັບຄວາມສູນເສຍ ຫຼື ເສຍຫາຍທີ່ຖືຄຸ້ມກັນໃນສັນຍານີ້ ຫຼັກການປະເມີນຄວາມເສຍຫາຍຈະແມ່ນມູນຄ່າການສ້ອມແປງ, ປ່ຽນແທນສື່ຂໍ້ມູນນັ້ນໃຫ້ກັບຄືນສູ່ສະພາບເດີມກ່ອນເກີດຄວາມສູນເສຍຫຼືເສຍຫາຍ ລວມທັງຄ່າໃຊ້ຈ່າຍໃນ ການຜະລິດຂໍ້ມູນອີເລັກໂທຣນິກນັ້ນຄືນ, ແຕ່ສື່ດັ່ງກ່າວຕ້ອງໄດ້ຖືກສ້ອມແປງ, ປ່ຽນແທນ ຫຼື ປ່ຽນຄືນ. ຄ່າໃຊ້ຈ່າຍໃນການຜະລິດຂໍ້ມູນຄືນນັ້ນຕ້ອງແມ່ນມູນຄ່າທີ່ຈຳເປັນແລະສົມເຫດສົມຜົນໂດຍບໍ່ເກີນມູນຄ່າເສຍຫາຍຈິງໃນແຕ່ ລະຄັ້ງທີ່ຜູ້ໄດ້ຮັບການປະກັນໄພຕ້ອງຈ່າຍສຳລັບການສ້າງຄືນ, ຮຽກຂໍ້ມູນຄືນ ແລະ ການປະກອບຂໍ້ມູນອີເລັກໂທຣນິກນັ້ນຄືນ. ຖ້າສື່ຂໍ້ມູນນັ້ນບໍ່ໄດ້ຮັບການສ້ອມແປງ, ປ່ຽນແທນ ຫຼື ປ່ຽນຄືນຕາມຫຼັກການປະເມີນຄວາມເສຍຫາຍນີ້ແມ່ນຈະຖືເອົາມູນຄ່າຂອງສື່ຂໍ້ມູນເປົ່າ. ຢ່າງໃດກໍ່ຕາມສັນຍາປະກັນໄພນີ້ຈະບໍ່ຄຸ້ມກັນມູນຄ່າທີ່ເປັນມູນຄ່າຂອງຂໍ້ມູນອີເລັກໂທຣນິກນັ້ນໃຫ້ແກ່ຜູ້ໄດ້ຮັບການປະກັນໄພ ຫຼື ພາກສ່ວນອື່ນໃດ, ເຖິງແມ່ນວ່າຂໍ້ມູນອີເລັກໂທຣນິກ ບໍ່ສາມາດສ້າງຄືນໄດ້, ຮຽກຄືນໄດ້ ຫຼື ປະກອບຄືນໄດ້ ກໍ່ຕາມ.

### ເງື່ອນໄຂພິເສດກ່ຽວກັບຂໍ້ຍົກເວັ້ນແລະຂໍ້ຈຳກັດເລື່ອງມາດຕະການລົງໂທດດ້ານເສດຖະກິດ (LMA 3100)

ຜູ້ປະກັນໄພ/ຜູ້ປະກັນໄພຕໍ່ຈະບໍ່ໃຫ້ການຄຸ້ມກັນ ແລະ ບໍ່ຮັບຜິດຊອບຊຳລະຄ່າເສຍຫາຍ ຫຼື ໃຫ້ຜົນປະໂຫຍດໃດໆ ພາຍໃຕ້ສັນຍາປະກັນໄພນີ້ ຖ້າຫາກວ່າການຄຸ້ມກັນນັ້ນ, ການຊຳລະຄ່າເສຍຫາຍນັ້ນ ຫຼື ການໃຫ້ຜົນປະໂຫຍດນັ້ນ ຈະເຮັດໃຫ້ຜູ້ປະກັນໄພ/ຜູ້ປະກັນໄພຕໍ່ ມີຄວາມສ່ຽງກ່ຽວກັບການລົງໂທດ, ຂໍ້ຫ້າມ ຫຼື ຂໍ້ຈຳກັດໃດໆ ພາຍໃຕ້ການລົງມະຕິຂອງສະຫະປະຊາຊາດ ຫຼື ມາດຕະການລົງໂທດ ຫຼື ກົດໝາຍ ຫຼື ລະບຽບການຕ່າງໆທາງເສດຖະກິດ ຫຼື ການຄ້າຂອງສະຫະພາບຢູໂລບ, ຂອງສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ຂອງສະຫະລັດອາເມລິກາ ແລະ/ຫຼື ກົດໝາຍ ຫຼື ລະບຽບກ່ຽວກັບການລົງໂທດທາງເສດຖະກິດ ແລະ ການຄ້າຂອງຊາດອື່ນໆທີ່ມີຜົນບັງຄັບໃຊ້.

# ການຕົກລົງເຫັນດີຂອງຜູ້ໄດ້ຮັບການປະກັນໄພກ່ຽວກັບຂໍ້ມູນສ່ວນຕົວ

## ການອະນຸຍາດໃຫ້ສື່ສານ ແລະ ໃຫ້ຄວາມຮ່ວມມື ຜ່ານຊ່ອງທາງດີຈິຕອນ

ໂດຍການຕົກລົງເຫັນດີໃນຊື້ປະກັນໄພດັ່ງກ່າວ, ທ່ານຍິນຍອມທີ່ຈະຮັບບັນດາການແຈ້ງເຕືອນຜ່ານຂໍ້ຄວາມ ແລະ/ຫຼື ອີເມລ, ໂດຍການນຳໃຊ້ໝາຍເລກໂທລະສັບມືຖື ແລະ/ຫຼື ທີ່ຢູ່ອີເມລ ທີ່ໄດ້ສະໜອງໃຫ້ໃນສັນຍາປະກັນໄພດັ່ງກ່າວ. ບັນດາການແຈ້ງເຕືອນອາດຈະລວມທັງຂໍ້ມູນທີ່ກ່ຽວກັບການຕໍ່ສັນຍາປະກັນໄພ, ສະຖານະການຊຳລະຄ່າທຳນຽມປະກັນໄພ, ສະຖານະການຊຳລະສິນທົດແທນ ແລະ ຂໍ້ມູນອື່ນໆທີ່ກ່ຽວຂ້ອງກັບປະກັນໄພຂອງທ່ານ.

ພ້ອມດຽວກັນນັ້ນ ທ່ານຍິນຍອມໃນການເກັບກຳ, ນຳໃຊ້, ເປີດເຜີຍຂໍ້ມູນສ່ວຍຕົວຂອງທ່ານຕາມທີ່ໄດ້ລະບຸໄວ້ໃນ ແຈ້ງການຂໍ້ມູນຄວາມເປັນສ່ວນຕົວຂອງພວກຂອງພະເຈົ້າ, ເຊິ່ງສາມາດເຂົ້າເຖິງໄດ້ທີ່ https://www.agl.com.la
ແຈ້ງການຂໍ້ມູນຄວາມເປັນສ່ວນຕົວຂອງພວກຂ້າພະເຈົ້າໄດ້ອະທິບາຍເຖິງ:

- ຊື່ ແລະ ນາມສະກຸນ, ທີ່ຢູ່, ຂໍ້ມູນຕິດຕໍ່, ອື່ນໆ
- ຂໍ້ມູນທັງໝົດໄດ້ຖືກເກັບຮັກສາໄວ້ໃນເຄື່ອຄາຍທີ່ປອດໄພຂອງ AGL ເຊິ່ງບໍ່ອະນຸຍາດໃຫ້ບັນຊີຜູ້ໃຊ້ທີ່ບໍ່ແມ່ນຂອງ AGL ເຂົ້າເຖິງໂດຍກົງ.
- ທ່ານສາມາດຮ້ອງຂໍມາຍັງ AGL ໄດ້ຕະຫຼອດເວລາເພື່ອເຂົ້າເບິ່ງ, ລຶບ ແລະ ປ່ຽນແປງຂໍ້ມູນຂອງທ່ານໂດຍການສະໜອງຫຼັກຖານເພື່ອຢັ້ງຢືນຕົວຕົນໃນເວລາຮ້ອງຂໍ.

ຖ້າຫາກທ່ານບໍ່ຕ້ອງການທີ່ຈະໄດ້ຮັບບັນດາການສື່ສານດັ່ງກ່າວ ຫຼື ຕ້ອງການຖອນການຍິນຍອມຂອງທ່ານ, ທ່ານສາມາດຕິດຕໍ່ຫາພວກຂ້າພະເຈົ້າໄດ້ທີ່ ພະແນກກົດໝາຍ ແລະ ກອດກາ: annie@agl.com.la

## ການອະນຸຍາດໃຫ້ສື່ສານຂໍ້ມູນການຕະຫຼາດ

ໂດຍການຕົກລົງເຫັນດີໃນຊື້ປະກັນໄພດັ່ງກ່າວ, ທ່ານຍິນຍອມໃຫ້ ບໍລິສັດປະກັນໄພແຫ່ງປະເທດລາວ ຈຳກັດຜູ້ດຽວ (AGL) ໃນການເກັບກຳ, ນຳໃຊ້ ແລະ ເປີດເຜີຍຂໍ້ມູນສ່ວຍຕົວຂອງທ່ານ ເພື່ອຈຸດປະສົງທາງດ້ານການຕະຫຼາດ, ລວມທັງແຕ່ບໍ່ຈຳກັດພຽງ:

~ ການສະໜອງຂໍ້ມູນກ່ຽວກັບບັນດາຜະລິດຕະພັນ ແລະ ການບໍລິການຂອງພວກຂ້າພະເຈົ້າ.
~ ການດຳເນີນບັນດາກິດຈະກຳສົ່ງເສີມການຂາຍ ແລະ ຂໍ້ສະເໜີພິເສດ.
~ ການຈັດບັນດາ ການຈັບສະຫຼາກຊິງໂຊກ ແລະ ການສຳຫລວດທາງດ້ານການຕະຫຼາດ.
~ ການມີສ່ວນຮ່ວມຂອງບັນດາຜູ້ໃຫ້ບໍລິການບຸກຄົນທີສາມ ສຳລັບການສະໜັບສະໜູນທາງການຕະຫຼາດ.
~ ການແບ່ງປັນຂໍ້ມູນທີ່ທ່ານອາດຈະສົນໃຈ.

**ບັນດາສິດຂອງທ່ານ:**
ທ່ານມີສິດຖອນການຍິນຍອມຂອງທ່ານ ໃນການຮັບບັນດາການສື່ສານທາງດ້ານການຕະຫຼາດໄດ້ຕະຫຼອດເວລາ.
ການຖອນການຍິນຍອມຂອງທ່ານ, ກະລຸນາຕິດຕໍ່ພວກຂ້າພະເຈົ້າໄດ້ທີ່ພະແນກກົດໝາຍ ແລະ ກອດກາ: annie@agl.com.la ຫຼື ການປ່ຽນແປງການກຳນົດຂອງທ່ານ ໃນການຕັ້ງຄ່າບັນຊີຂອງທ່ານ.

**ການປົກປ້ອງຂໍ້ມູນ:**
ຂໍ້ມູນສ່ວນຕົວຂອງທ່ານຈະຮັບການດຳເນີນການຕາມແຈ້ງການຂໍ້ມູນຄວາມເປັນສ່ວນຕົວຂອງພວກຂ້າພະເຈົ້າ, ເຊິ່ງສາມາດເຂົ້າເຖິງໄດ້ທີ່ https://www.agl.com.la.
ພວກຂ້າພະເຈົ້າຮັບປະກັນວ່າຂໍ້ມູນຂອງທ່ານ ຈະຖືກເກັບຮັກສາໄວ້ຢ່າງປອດໄພ ແລະ ນຳໃນ້ສຳລັບຈຸດປະສົງທີ່ທ່ານຍິນຍອມເທົ່ານັ້ນ.

**ໝາຍເຫດ:**
ການຍິນຍອມດັ່ງກ່າວ ບໍ່ແມ່ນເງື່ອນໄຂສຳລັບການຊື້ຜະລິດຕະພັນປະກັນໄພໃດໆ. ການຕັດສິນໃຈຂອງທ່ານ ໃນການສະໜອງ ຫຼື ຖອນການຍິນຍອມດັ່ງກ່າວ ຈະບໍ່ມີຜົນກະທົບຕໍ່ການຄຸ້ມຄອງປະກັນໄະຂອງທ່ານ.

************************************